ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1735-

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ /ກປ

ນະຄອນຫຼວງວຽງຈັນ, ວັນທີ 05 MAY 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ

- ອີງຕາມ ກົດໝາຍ ວ່າດ້ວຍອາຊີວະສຶກສາ ສະບັບເລກທີ 42/ສພຊ, ລົງວັນທີ 23 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຕົກລົງເຫັນດີ ຂອງກອງປະຊຸມຄະນະປະຈຳພັກ ກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 25 ເມສາ 2022.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ແນໃສ່ຈັດຕັ້ງປະຕິບັດວຽກງານກໍ່ສ້າງວິຊາການດ້ານກະສິກຳ ແລະ ປ່າໄມ້ ລະດັບຊັ້ນສູງ ຕາມແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີປະສິດທິພາບສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຂຽນເປັນຕົວອັກສອນຫຍໍ້ວ່າ "**ວກປບ**" ແມ່ນຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກົມຈັດຕັ້ງ ແລະ ພະນັກງານ, ກະຊວງກະສິກຳ ແລະ ປ່າໄມ້; ມີພາລະບົດບາດໃນການກໍ່ສ້າງວິຊາການດ້ານ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ລະດັບຊັ້ນສູງ ພ້ອມທັງຝຶກອົບຮົມເຕັກນິກວິຊາການດັ່ງກ່າວ ໃຫ້ແກ່ພະນັກງານ, ຊາວກະສິກອນບັນດາເຜົ່າ ແລະ ຜູ້ປະກອບການ ທັງພາກລັດ ແລະ ເອກະຊົນ ຕາມແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ບົນພື້ນຖານ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍອາຊີວະສຶກສາ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີໜ້າທີ່ ດັ່ງນີ້:

1. ປະຕິບັດ ກົດໝາຍ, ດຳລັດ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຄົ້ນຄວ້າ, ເຊື່ອມຊຶມ ແນວທາງ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານພັດທະນາຊັບພະຍາກອນມະນຸດ ດ້ານກະສິກຳ ແລະ ປ່າໄມ້;
3. ສ້າງຮ່າງ ແຜນຍຸດທະສາດ, ນະໂຍບາຍ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານພັດທະນາ ຊັບພະຍາກອນມະນຸດດ້ານກະສິກຳ ແລະ ປ່າໄມ້ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ຮັບຮອງ ແລະ ອະນຸມັດ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງ ກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳ ນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງກໍ່ສ້າງ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນແຕ່ລະ ໄລຍະ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ; ປັບປຸງ ແບບແຜນວິທີເຮັດວຽກ, ກົນໄກການຄຸ້ມ ຄອງ, ການບໍລິຫານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ໃຫ້ມີປະສິດທິພາບ;
5. ຄົ້ນຄວ້າ, ວາງແຜນແມ່ບົດການພັດທະນາ, ການຈັດສັນພື້ນທີ່, ການນຳໃຊ້ທີ່ດິນຢ່າງລະອຽດ; ສ້າງ ແລະ ປັບ ປຸງ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ໄດ້ມາດຕະຖານ ໂດຍອີງໃສ່ແຜນພັດທະນາ ພື້ນຖານໂຄງລ່າງ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ເພື່ອໃຫ້ເປັນບ່ອນ ສາທິດ, ທົດລອງສ້າງ ຄວາມຊຳນານງານທາງດ້ານເຕັກນິກວິຊາການ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ໃຫ້ພະນັກງານ-ລັດຖະກອນ, ຄູ-ອາຈານ ແລະ ນັກສຶກສາ;
6. ພັດທະນາຫຼັກສູດ ການຮຽນ-ການສອນ ແບບຄວບຄູ່, ເຊັນບົດບັນທຶກຊ່ວຍຈຳ (MOU) ກັບຄູ່ຮ່ວມງານ, ຜູ້ ປະກອບການ ແລະ ຈັດຕັ້ງປະຕິບັດ ການຮຽນ-ການສອນ ແບບຄວບຄູ່ ເພື່ອໃຫ້ມີໜ່ວຍງານກຸ່ມອາຊີບ ທີ່ປະ ກອບດ້ວຍ ພາກລັດ, ເອກະຊົນ, ກຸ່ມຜູ້ຜະລິດ, ສະຫະກອນ, ຜູ້ປະກອບການ ເຮັດໃຫ້ນັກສຶກສາມີຄວາມເຂົ້າ ໃຈສະພາບຕະຫຼາດແຮງງານ ແລະ ເປັນການປູກຈິດສຳນຶກ ແນວຄິດລິເລີ່ມການເຮັດທຸລະກິດກະສິກຳ ໂດຍນຳ ໃຊ້ເຕັກນິກວິຊາການດ້ານ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ທີ່ເປັນລະບົບ ເພື່ອສ້າງເປັນຜູ້ປະກອບການດ້ວຍຕົນເອງໃນອະນາຄົດ;
7. ປັບປຸງ ແລະ ພັດທະນາ ລະບົບການຝຶກງານໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງນັກສຶກສາທີ່ຮຽນຈົບ ທັງມີການຕິດຕາມນັກສຶກສາ ພາຍຫຼັງຮຽນຈົບ ເພື່ອສຶກສາຂໍ້ມູນຄວາມຕ້ອງການ ຂອງຕະຫຼາດແຮງງານ ນຳມາປະເມີນຜົນຫຼັກສູດ ພ້ອມທັງ ທົບທວນ ທັງລະບົບ 03 ປີ ແລະ ລະບົບຕໍ່ເນື່ອງ 1,5 ປີ ເພື່ອປັບປຸງເນື້ອໃນ ການຮຽນ-ການສອນ ໃຫ້ມີຄວາມ ສອດຄ່ອງ ຢ່າງໜ້ອຍ 02 ປີ ຕໍ່ 01 ຄັ້ງ;
8. ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນສາຂາວິຊາສະເພາະຕ່າງໆ ໃຫ້ນັບມື້ສູງຂຶ້ນ ຕາມມາດຕະຖານ ລະດັບຊາດ, ພາກພື້ນ ແລະ ສາກົນ ດ້ວຍຫຼາຍຮູບແບບ ທີ່ຕິດພັນກັບການ ຮຽນ-ການສອນ, ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງ ພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນການສ້າງບຸກຄະລາກອນໃຫ້ມີຄຸນນະພາບ, ເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ໃຫ້ດີຂຶ້ນເທື່ອລະກ້າວ;

9. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານປະກັນຄຸນນະພາບການສຶກສາ ທີ່ທາງກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
10. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ນຳສະເໜີ ນິຕິກຳຕ່າງໆ ກ່ຽວກັບວຽກງານ ຄຸ້ມຄອງ-ບໍລິຫານ ວິທະຍາໄລ ພ້ອມທັງເຜີຍແຜ່ໃຫ້ບັນດາ ຫ້ອງການ ແລະ ຄະນະວິຊາ ພາຍໃນວິທະຍາໄລ ຢ່າງທົ່ວເຖິງ;
11. ສຶກສາອົບຮົມການເມືອງແນວຄິດ ໃຫ້ພະນັກງານ-ລັດຖະກອນ, ຄູ-ອາຈານ ແລະ ນັກສຶກສາ ໃຫ້ມີຄວາມເຊື່ອໝັ້ນຕໍ່ການນຳພາ ຂອງພັກ-ລັດ, ມີສະຕິຕໍ່ການຈັດຕັ້ງ, ປະຕິບັດກົດໝາຍ ແລະ ລະບຽບການ, ມີຄຸນສົມບັດສົມທຳປະຕິວັດ ແລະ ມີຄວາມສາມັກຄີປອງດອງ, ຕ້ານທຸກປະກົດການຫຍໍ້ທໍ້ໃນສັງຄົມ ແລະ ກົນອຸບາຍການຫັນປ່ຽນໂດຍສັນຕິຂອງສັດຕູ;
12. ກໍ່ສ້າງພະນັກງານວິຊາການ ລະດັບຊັ້ນສູງ ໃນສາຂາວິຊາ ປູກຝັງ, ລ້ຽງສັດ ແລະ ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ໃຫ້ມີຄຸນນະພາບ ໂດຍການປັບປຸງ ແລະ ພັດທະນາ ຫຼັກສູດ ໃຫ້ໄປຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານພາກເອກະຊົນໃຫ້ຫຼາຍປັບປຸງເຕັກນິກການຮຽນ-ການສອນ, ການຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຫຼັກສູດ ກໍຄືຂະບວນການຮຽນ-ການສອນ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ໃຫ້ມີຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສັງຄົມ;
13. ໂຄສະນາ, ສົ່ງເສີມ ແລະ ເລືອກເຟັ້ນເອົານັກສຶກສາທີ່ຄົບເງື່ອນໄຂເຂົ້າຮຽນ ຕາມຄວາມສາມາດຕົວຈິງຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ພ້ອມທັງປະຕິບັດຕາມແຜນພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ວາງອອກ;
14. ປັບປຸງ, ພັດທະນາ ຄູ່ມືການຮຽນ-ການສອນ ກ່ຽວກັບສາຂາວິຊາ ປູກຝັງ, ລ້ຽງສັດ ແລະ ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ເປັນແຕ່ລະໄລຍະ; ນຳໃຊ້ຂໍ້ມູນຕ່າງໆ ເພື່ອນຳມາໝູນໃຊ້ເຂົ້າໃນບົດສອນ ໃຫ້ສອດຄ່ອງ ແລະ ທັນເວລາ;
15. ສ້າງ ແລະ ປັບປຸງ ຫຼັກສູດຝຶກອົບຮົມວິຊາການໄລຍະສັ້ນ ແລະ ດຳເນີນການຝຶກອົບຮົມ ທາງດ້ານວິຊາການໃຫ້ແກ່ພະນັກງານກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ເມືອງ, ນະຄອນ, ກຸ່ມບ້ານ, ບ້ານ, ຊາວກະສິກອນ, ພະນັກງານ ຂອງໂຄງການ ແລະ ຫົວໜ່ວຍທຸລະກິດ ທີ່ມີຄວາມສົນໃຈ;
16. ພົວພັນຮ່ວມມື, ຂົນຂວາຍ ແລະ ຍາດແຍ່ງການຊ່ວຍເຫຼືອ ຈາກອົງການຕ່າງໆ ທັງພາກລັດ ແລະ ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້ ເພື່ອພັດທະນາວິທະຍາໄລ ໃຫ້ມີຄຸນນະພາບດີເທື່ອລະກ້າວ;
17. ຄຸ້ມຄອງ, ບໍລິຫານການເງິນ ແລະ ຊັບສິນ ຂອງວິທະຍາໄລ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບ, ສັງລວມ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;
18. ສ້າງ, ຄຸ້ມຄອງ, ປັບປຸງ ແລະ ພັດທະນາ ຖານຂໍ້ມູນສະຖິຕິ ແລະ ວຽກງານຂ່າວສານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ເພື່ອເຊື່ອມໂຍງກັບຖານຂໍ້ມູນ ຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງກະສິກຳ ແລະ ປ່າໄມ້;
19. ຕິດຕາມ ແລະ ປະເມີນຜົນ ການຮຽນ-ການສອນ, ການຄຸ້ມຄອງ ແລະ ການພັດທະນາສື່ການຮຽນ-ການສອນ, ການຄຸ້ມຄອງຂໍ້ມູນສະຖິຕິ ພະນັກງານ-ລັດຖະກອນ, ຄູ-ອາຈານ, ການບໍລິຫານຈັດການ ແລະ ບໍລິການໃນຫ້ອງສະໝຸດ;
20. ຈັດຕັ້ງແລກປ່ຽນປະສົບການລະຫວ່າງ ຄູ-ອາຈານ ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ແລະ ຄູ-ອາຈານ ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນ ຊົນລະປະທານຊັ້ນສູງ ທ່າງ່ອນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້, ສະຖາບັນການສຶກສາຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ; ເຂົ້າຮ່ວມຂະບວນການ

ແຂ່ງຂັນ ທັກສະສີມືີ, ຫົວຄິດປະດິດສ້າງ ໃນການ ຄົ້ນຄວ້າ, ອອກແບບ, ສົ່ງເສີມ ແລະ ບໍລິການເຕັກນິກ ດ້ານ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ທັງພາຍໃນ ແລະ ພາຍນອກ ວິທະຍາໄລ;

21. ປະສານສົມທົບກັບ ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປ້ອງກັນຄວາມສະຫງົບ ຮັບປະກັນຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ຮັກສາສະພາບແວດລ້ອມ, ສະກັດກັ້ນສິ່ງເສບຕິດ, ພະຍາດຕິດຕໍ່ ແລະ ສິ່ງບໍ່ດີອື່ນໆ ບໍ່ໃຫ້ເກີດຂຶ້ນໃນວິທະຍາໄລ;

22. ຄົ້ນຄວ້າ ວິທະຍາສາດ-ເຕັກໂນໂລຊີ, ພັດທະນາພື້ນຖານວັດຖຸເຕັກນິກ ແລະ ສິ່ງອຳນວຍຄວາມສະດວກ ຕ່າງໆ ເພື່ອນຳໃຊ້ເຂົ້າໃນການຮຽນ-ການສອນ ດ້ານ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ລວມທັງໃຫ້ການບໍລິການຊຸມຊົນ ແລະ ສັງຄົມ ໃນການໃຫ້ຄຳປຶກສາທາງດ້ານ ວິຊາການ ທີ່ກ່ຽວຂ້ອງ;

23. ສ້າງ ແລະ ພັດທະນາ ຖານຂໍ້ມູນ ກ່ຽວກັບສະຖິຕິນັກສຶກສາທີ່ສຳເລັດການສຶກສາ ເພື່ອຕິດຕາມ ແລະ ປະເມີນ ຜົນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ;

24. ນຳພາ-ຊີ້ນຳ, ຊຸກຍູ້ ອົງການຈັດຕັ້ງມະຫາຊົນ ໃຫ້ກາຍເປັນກຳລັງແຮງໃນການຈັດຕັ້ງແຜນນະໂຍບາຍ ຂອງ ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ວາງອອກ ພ້ອມທັງສົ່ງເສີມບົດບາດຍິງ-ຊາຍ ແລະ ພັດທະນາ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ພາຍໃນວິທະຍາໄລ;

25. ອະນຸລັກຮັກສາ ແລະ ສົ່ງເສີມ ວຽກງານ ກິລາ, ສິລະປະ, ວັດທະນະທຳ, ຈາລີຍະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ພ້ອມທັງປົກປັກຮັກສາສິ່ງແວດລ້ອມ ແລະ ສົ່ງເສີມວຽກງານກະສິກຳ ແລະ ປ່າໄມ້;

26. ຄົ້ນຄວ້າ, ນຳສະເໜີແຕ່ງຕັ້ງ ຄະນະກຳມະການປະເມີນ, ຈັດຕັ້ງຮູບແບບວິທີການ ແລະ ສ້າງແຜນການປະເມີນ ຕົນເອງ ໃຫ້ແກ່ຄະນະກຳມະການປະເມີນ; ສັງລວມ, ລາຍງານ ການປະເມີນຕົນເອງ (SAR) ໃຫ້ແກ່ສູນປະກັນຄຸນນະພາບການສຶກສາ, ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

27. ຈັດຕັ້ງການປະເມີນ ພະນັກງານ-ລັດຖະກອນ, ຄູ-ອາຈານ ປະຈຳປີ ເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍຍ້ອງຍໍ ຕໍ່ພະນັກງານຜູ້ທີ່ມີຄວາມຫ້າວຫັນ ແລະ ມີຜົນງານດີເດັ່ນ ລວມທັງປະຕິບັດວິໄນຕໍ່ຜູ້ທີ່ກະທຳຜິດ;

28. ສັງລວມ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ປະຈຳເດືອນ, 3 ເດືອນ, 6 ເດືອນ 9 ເດືອນ ແລະ ປະຈຳປີ ຂອງວິທະຍາໄລ ໃຫ້ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຊາບ ແລະ ໃຫ້ທິດຊີ້ນຳ;

29. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 4 ຂອບເຂດສິດ**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີສິດ ດັ່ງນີ້:

1. ສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ, ບັນຈຸ-ສັບຊ້ອນ, ຈັດວາງ, ແຕ່ງຕັ້ງ ແລະ ປະຕິບັດນະໂຍບາຍ ຕໍ່ບຸກຄະລາກອນຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ ທີ່ກົດໝາຍ ແລະ ລະບຽບການກຳນົດໄວ້;

2. ຮຽກໂຮມ ພະນັກງານນຳພາ-ຄຸ້ມຄອງ, ພະນັກງານ-ລັດຖະກອນ ແລະ ຄູ-ອາຈານ ໃນຄວາມຮັບຜິດຊອບ ຂອງຕົນ; ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງ

ສິນຄ້າກະສິກຳ ແລະ ກົນຈັກກະສິກຳ, ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນຮາກຖານ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;

3. ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ, ງົບປະມານ, ຊັບສິນຂອງລັດ, ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ທີ່ກົດໝາຍ ແລະ ລະບຽບການ ກຳນົດໄວ້;
4. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ໃບຢັ້ງຢືນ ແລະ ເອກະສານທາງການຕ່າງໆ ຂອງວິທະຍາໄລ;
5. ອອກໃບປະກາສະນີຍະບັດ ໃຫ້ແກ່ຜູ້ສຳເລັດການສຶກສາ ຕາມການຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້; ອອກໃບຢັ້ງຢືນການຝຶກອົບຮົມດ້ານວິຊາການທີ່ກ່ຽວຂ້ອງ ແລະ ເອກະສານຕ່າງໆ ທາງດ້ານການສຶກສາຂອງວິທະຍາໄລ ຕາມການແບ່ງຂັ້ນຄຸ້ມຄອງ;
6. ນຳສະເໜີ ແຜນພັດທະນາວິທະຍາໄລ ຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາອະນຸມັດ; ນຳສະເໜີລັດຖະມົນຕີ ເພື່ອຂໍອະນຸມັດນຳໃຊ້ຫຼັກສູດ, ສ້າງ ແລະ ຂະຫຍາຍ ສາຂາວິຊາໃໝ່ ຈາກກະຊວງສຶກສາທິການ ແລະ ກິລາ;
7. ປະຕິບັດການຮ່ວມມື ທາງດ້ານວິຊາການ ແລະ ການຄົ້ນຄວ້າວິທະຍາສາດຕ່າງໆກັບບັນດາ ສະຖາບັນການສຶກສາ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທັງພາກລັດ ແລະ ເອກະຊົນ ຕາມການຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້;
8. ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ແລະ ນັກສຶກສາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ເປີດກວ້າງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຫົວໜ່ວຍແຮງງານ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມເຂົ້າໃນການພັດທະນາວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ;
10. ຊຸກຍູ້, ຕິດຕາມ, ກວດກາ, ແນະນຳ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການຮຽນ-ການສອນ ສາຂາວິຊາ ປູກຝັງ, ລ້ຽງສັດ ແລະ ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ;
11. ຈັດຝຶກອົບຮົມເຕັກນິກວິຊາການ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ໃຫ້ພະນັກງານ, ຊາວກະສິກອນບັນດາເຜົ່າ ແລະ ຜູ້ປະກອບການ ທັງພາກລັດ ແລະ ເອກະຊົນ;
12. ເຂົ້າຮ່ວມກອງປະຊຸມປຶກສາຫາລື, ແລກປ່ຽນ, ສະເໜີຄຳຄິດຄຳເຫັນທີ່ພົວພັນເຖິງວຽກງານກະສິກຳ ແລະ ປ່າໄມ້ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
13. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງການບໍລິຫານ ແລະ ແຜນການ;
2. ຫ້ອງການພັດທະນາວິຊາການ;
3. ຄະນະວິຊາປູກຝັງ;
4. ຄະນະວິຊາລ້ຽງສັດ ແລະ ການປະມົງ;

5. ຄະນະວິຊາປ່າໄມ້;
6. ຄະນະວິຊາທຸລະກິດກະສິກຳ;
7. ຄະນະວິຊາສັດຕະວະແພດ.

ນອກຈາກນີ້, ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຍັງມີສະພາທີ່ປຶກສາ, ສະພາບໍລິຫານ ແລະ ສະພາວິຊາການວິທະຍາໄລ ຊຶ່ງເປັນກົງຈັກທີ່ບໍ່ປະຈຳການ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຜູ້ອຳນວຍການ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ, ຮອງລັດຖະມົນຕີ ແລະ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການປະຕິບັດວຽກງານຂອງຕົນ.

   ໃນເວລາຜູ້ອຳນວຍການ ຕິດຂັດ ຕ້ອງມອບສິດໃຫ້ຮອງຜູ້ອຳນວຍການທ່ານໃດທ່ານໜຶ່ງ ຮັກສາການແທນ.

2. ຮອງຜູ້ອຳນວຍການ ຈຳນວນໜຶ່ງ ຊ່ວຍຜູ້ອຳນວຍການ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຜູ້ອຳນວຍການ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຜູ້ອຳນວຍການ ທີ່ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຜູ້ອຳນວຍການ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າຫ້ອງການ, ຫົວໜ້າຄະນະວິຊາ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າຄະນະວິຊາ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມ ກົດໝາຍ ແລະ ລະບຽບການກຳນົດໄວ້.

**ມາດຕາ 7 ໂຄງປະກອບບຸກຄະລາກອນ ຂອງສະພາທີ່ປຶກສາ, ສະພາບໍລິຫານ ແລະ ສະພາວິຊາການ ວິທະຍາໄລ**

**ກ. ສະພາທີ່ປຶກສາວິທະຍາໄລ**

ສະພາທີ່ປຶກສາວິທະຍາໄລ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

| | | |
|---|---|---|
| 1. | ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນປະທານ |
| 2. | ຜູ້ຕາງໜ້າກົມແຜນການ ແລະ ຮ່ວມມື | ເປັນຮອງປະທານ |
| 3. | ຜູ້ອຳນວຍການວິທະຍາໄລ | ເປັນຮອງປະທານ, ຜູ້ປະຈຳການ |
| 4. | ຜູ້ຕາງໜ້າກົມວິຊາການກ່ຽວຂ້ອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| 5. | ຜູ້ຕາງໜ້າພາກລັດ ແລະ ເອກະຊົນ ພາຍໃນແຂວງ ຈຳນວນໜຶ່ງ | ເປັນກຳມະການ |
| 6. | ຕົວແທນອະດີດນັກສຶກສາ | ເປັນກຳມະການ |
| 7. | ຫົວໜ້າຫ້ອງການບໍລິຫານ ແລະ ແຜນການ | ເປັນຫົວໜ້າກອງເລຂາ |
| 8. | ຫົວໜ້າຫ້ອງການພັດທະນາວິຊາການ | ເປັນຮອງຫົວໜ້າກອງເລຂາ |

**ຂ. ສະພາບໍລິຫານວິທະຍາໄລ**

ສະພາບໍລິຫານວິທະຍາໄລ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

| | | |
|---|---|---|
| 1. | ຜູ້ອຳນວຍການວິທະຍາໄລ | ເປັນປະທານ |
| 2. | ຮອງຜູ້ອຳນວຍການວິທະຍາໄລ | ເປັນຮອງປະທານ |
| 3. | ຫົວໜ້າຫ້ອງການ ແລະ ຄະນະວິຊາ ຕ່າງໆ | ເປັນກຳມະການ |
| 4. | ຕາງໜ້າອົງການຈັດຕັ້ງມະຫາຊົນ | ເປັນກຳມະການ |
| 5. | ຕົວແທນນັກສຶກສາ | ເປັນກຳມະການ |
| 6. | ຫົວໜ້າຫ້ອງການບໍລິຫານ ແລະ ແຜນການ | ເປັນຫົວໜ້າກອງເລຂາ |
| 7. | ຮອງຫົວໜ້າຫ້ອງການບໍລິຫານ ແລະ ແຜນການ | ເປັນຮອງຫົວໜ້າກອງເລຂາ |

**ຄ. ສະພາວິຊາການວິທະຍາໄລ**

ສະພາວິຊາການວິທະຍາໄລ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

| | | |
|---|---|---|
| 1. | ຮອງຜູ້ອຳນວຍການວິທະຍາໄລ ຜູ້ຊີ້ນຳວຽກງານວິຊາການ | ເປັນປະທານ |
| 2. | ຫົວໜ້າຫ້ອງການພັດທະນາວິຊາການ | ເປັນຮອງປະທານ |
| 3. | ຫົວໜ້າຄະນະວິຊາຕ່າງໆ | ເປັນກຳມະການ |
| 4. | ອາຈານປະຈຳຫ້ອງ | ເປັນກຳມະການ |
| 5. | ຮອງຫົວໜ້າຫ້ອງການພັດທະນາວິຊາການ | ເປັນຫົວໜ້າກອງເລຂາ |

## ໝວດທີ 4
## ໜ້າທີ່ ຂອງບັນດາ ຫ້ອງການ, ຄະນະວິຊາ ແລະ ສະພາ

**ມາດຕາ 8 ໜ້າທີ່ ຂອງຫ້ອງການບໍລິຫານ ແລະ ແຜນການ**

ຫ້ອງການບໍລິຫານ ແລະ ແຜນການ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ບໍລິຫານ ວຽກ, ພະນັກງານ-ລັດຖະກອນ, ງົບປະມານ, ເອກະສານທາງການ ແລະ ພິທີການ, ການຈັດຊື້-ຈັດຈ້າງ, ການຄຸ້ມຄອງນຳໃຊ້ອາຄານສະຖານທີ່, ຊັບສິນບັດ ແລະ ສິ່ງອຳນວຍຄວາມສະດວກ, ວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ ທົ່ວວິທະຍາໄລ ໃຫ້ມີປະສິດທິພາບ ແລະ ມີປະສິດ ທິຜົນ;
3. ຄົ້ນຄວ້າ, ວາງແຜນແມ່ບົດການພັດທະນາ, ການຈັດສັນພື້ນທີ່, ການນຳໃຊ້ທີ່ດິນ ຢ່າງລະອຽດ; ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ໄດ້ມາດຕະຖານ ໂດຍອີງໃສ່ແຜນພັດທະນາພື້ນຖານໂຄງລ່າງຂອງວິທະຍາໄລ ເພື່ອໃຫ້ເປັນບ່ອນ ສາທິດ, ທົດລອງ, ສ້າງຄວາມຊຳນານງານ ໃຫ້ພະນັກງານ-ລັດຖະກອນ, ຄູ-ອາຈານ ແລະ ນັກສຶກສາ;
4. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານພົວພັນຮ່ວມມື, ການຂະຫຍາຍເຄືອຂ່າຍຄູ່ຮ່ວມງານ, ການຜະລິດສື່

ຕ່າງໆ, ວຽກງານໂຄສະນາປະຊາສຳພັນ ແລະ ຂ່າວສານ ຂອງວິທະຍາໄລ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;

5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານປະກັນຄຸນນະພາບການສຶກສາ ທີ່ທາງກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ເປັນເຈົ້າການນຳພາ ຄົ້ນຄວ້າ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງກໍ່ສ້າງ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນແຕ່ລະໄລຍະ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ;
7. ປະສານສົມທົບກັບບັນດາ ຫ້ອງການ ແລະ ຄະນະວິຊາ ພາຍໃນວິທະຍາໄລ ແລະ ພາກສ່ວນພາຍນອກ ເພື່ອເຄື່ອນໄຫວວຽກງານຂອງຕົນ ໃຫ້ມີປະສິດທິຜົນ;
8. ປະຕິບັດວຽກງານກວດກາ ໂດຍການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງວຽກງານ ແລະ ງົບປະມານຕ່າງໆ ພາຍໃນຫ້ອງການບໍລິຫານ ແລະ ແຜນການ ແລະ ທົ່ວວິທະຍາໄລ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ພາຍໃນຫ້ອງການບໍລິຫານ ແລະ ແຜນການ;
10. ເປັນໃຈກາງໃນການຄົ້ນຄວ້າ, ສັງລວມ ການຈັດຕັ້ງວຽກງານປະເມີນຜົນງານປະຈຳປີ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ພາຍໃນວິທະຍາໄລ; ປະຕິບັດນະໂຍບາຍ ແລະ ສະເໜີຍ້ອງຍໍ ພາຍໃນໃຫ້ແກ່ບຸກຄົນທີ່ມີຄວາມຫ້າວຫັນ, ມີຜົນງານດີເດັ່ນ ປະກອບສ່ວນໃນການປະຕິບັດໜ້າທີ່ສຳເລັດ ແລະ ມີຄຸນນະພາບ ລວມທັງປະຕິບັດວິໄນຕໍ່ຜູ້ກະທຳຜິດ;
11. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ ໃນຫ້ອງການບໍລິຫານ ແລະ ແຜນການ ໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ດ້ວຍຫຼາຍຮູບແບບ ທີ່ຕິດພັນກັບການຮຽນ-ການສອນ, ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນໃນການສ້າງບຸກຄະລາກອນໃຫ້ມີຄຸນນະພາບ ເພື່ອເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
12. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງຫ້ອງການພັດທະນາວິຊາການ**

ຫ້ອງການພັດທະນາວິຊາການ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານພັດທະນາຫຼັກສູດ, ການຄຸ້ມຄອງການຮຽນ-ການສອນ ລວມທັງໝວດວິຊາວິທະຍາສາດພື້ນຖານ, ໝວດວິຊາພື້ນຖານຂອງວິຊາສະເພາະ ແລະ ວິຊາສະເພາະຂອງ 5 ສາຂາວິຊາ; ຕິດຕາມ ແລະ ປະເມີນຜົນ ການຮຽນ-ການສອນ, ການຄຸ້ມຄອງ ແລະ ການພັດທະນາ ສື່ການຮຽນ-ການສອນ, ການຄຸ້ມຄອງຂໍ້ມູນສະຖິຕິ ພະນັກງານຄູ-ອາຈານ, ນັກສຶກສາ, ການບໍລິຫານຈັດການ ແລະ ບໍລິການໃນຫ້ອງສະໝຸດ;
3. ພັດທະນາຫຼັກສູດການຮຽນ-ການສອນແບບຄວບຄູ່, ເຊັນບົດບັນທຶກຊ່ວຍຈຳ (MOU) ກັບຄູ່ຮ່ວມງານ, ຜູ້ປະກອບການ ແລະ ຈັດຕັ້ງປະຕິບັດການຮຽນ-ການສອນແບບຄວບຄູ່ ເພື່ອໃຫ້ມີໜ່ວຍງານກຸ່ມອາຊີບ

ທີ່ປະກອບດ້ວຍ ພາກລັດ, ເອກະຊົນ, ກຸ່ມຜູ້ຜະລິດ, ສະຫະກອນ ເຮັດໃຫ້ນັກສຶກສາມີຄວາມເຂົ້າໃຈ ສະພາບຕະຫຼາດແຮງງານ ແລະ ເປັນການປູກຈິດສຳນຶກແນວຄິດລິເລີ່ມການເຮັດທຸລະກິດກະສິກຳ ໂດຍນຳໃຊ້ເຕັກນິກວິຊາການດ້ານ ປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ທຸລະກິດກະສິກຳ ແລະ ສັດຕະວະແພດ ທີ່ເປັນລະບົບ ເພື່ອສ້າງເປັນຜູ້ປະກອບການດ້ວຍຕົນເອງໃນອະນາຄົດ;

4. ເປັນເຈົ້າການໃນການຈັດຕັ້ງວຽກງານ ການປັບປຸງ ແລະ ພັດທະນາ ລະບົບການຝຶກງານ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງ ນັກສຶກສາທີ່ຮຽນຈົບ ທັງມີການຕິດຕາມນັກສຶກສາພາຍຫຼັງຮຽນຈົບ ເພື່ອສຶກສາຂໍ້ມູນຄວາມຕ້ອງການ ຂອງຕະຫຼາດແຮງງານ ນຳມາປະເມີນຜົນຫຼັກສູດ ພ້ອມທັງທົບທວນ ທັງລະບົບ 03 ປີ ແລະ ລະບົບຕໍ່ ເນື່ອງ 1,5 ປີ ເພື່ອປັບປຸງເນື້ອໃນການຮຽນ-ການສອນ ໃຫ້ສອດຄ່ອງ ຢ່າງໜ້ອຍ 02 ປີ ຕໍ່ 01 ຄັ້ງ;
5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານການປະກັນຄຸນນະພາບການສຶກ ສາ ທີ່ທາງກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ຈັດຕັ້ງການໂຄສະນາເຜີຍແຜ່ວຽກງານປະກັນຄຸນນະພາບ ຢູ່ພາຍໃນ ແລະ ນອກ ວິທະຍາໄລ; ສັງລວມຫຼັກ ຖານວຽກງານປະກັນຄຸນນະພາບ, ຈັດຕັ້ງການປະເມີນ ພາຍໃນ ແລະ ພາຍນອກ ພ້ອມທັງວາງແຜນປັບປຸງ ວິທະຍາໄລ ໃຫ້ມີຄຸນນະພາບດີຂຶ້ນເທື່ອລະກ້າວ;
7. ປະສານສົມທົບກັບບັນດາ ຫ້ອງການ ແລະ ຄະນະວິຊາ ພາຍໃນວິທະຍາໄລ ແລະ ພາກສ່ວນພາຍນອກ ເພື່ອເຄື່ອນໄຫວວຽກງານຂອງຕົນ ໃຫ້ມີປະສິດທິຜົນ;
8. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນການຈັດຕັ້ງ ວຽກງານຕ່າງໆ ພາຍໃນຫ້ອງການພັດທະນາວິຊາການ; ຄຸ້ມຄອງ, ຮັກສາ ວັດຖຸອຸປະກອນ ແລະ ພາຫະນະ ຂອງຫ້ອງການພັດທະນາວິຊາການ;
9. ສ້າງແຜນພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ພາຍໃນຫ້ອງການ ພັດທະນາວິຊາການ ແລະ ທົ່ວວິທະຍາໄລ ໃຫ້ສົມຄູ່ກັບໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ ດ້ວຍຫຼາຍຮູບ ແບບ ທີ່ຕິດພັນກັບການຮຽນ-ການສອນ, ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການສ້າງບຸກຄະລາກອນ ໃຫ້ ມີຄຸນນະພາບ, ເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
10. ສັງລວມ, ລາຍງານ ການປະເມີນຕົນເອງ (SAR) ໃຫ້ແກ່ສູນປະກັນຄຸນນະພາບການສຶກສາ, ກົມອາຊີວະ ສຶກສາ, ກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
11. ສະເໜີແຕ່ງຕັ້ງ ຄະນະກຳມະການປະເມີນ, ຈັດຕັ້ງຮູບແບບວິທີການ ແລະ ສ້າງແຜນ ການປະເມີນຕົນເອງ ໃຫ້ແກ່ຄະນະກຳມະການປະເມີນ;
12. ປະສານສົມທົບກັບຄະນະກຳມະການປະເມີນ ເພື່ອຈັດຕັ້ງການປະເມີນຕົນເອງ ໂດຍການລົງສຳພາດຜູ້ຮຽນ, ພະນັກງານ-ລັດຖະກອນ, ຄູ-ອາຈານ, ຜູ້ປະກອບການ ແລະ ນັກສຶກສາທີ່ຮຽນຈົບ; ພ້ອມທັງລົງສັງເກດ ສະຖານທີ່ ຈັດຕັ້ງການຮຽນ-ການສອນ, ປະຕິບັດຕົວຈິງ ແລະ ຝຶກງານ;
13. ຄົ້ນຄວ້າ, ຂຽນບົດສະເໜີໂຄງການງົບປະມານໃນການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ ຂອງ ຫ້ອງການພັດທະນາວິຊາການ ເພື່ອສົ່ງໃຫ້ຫ້ອງການບໍລິຫານ ແລະ ແຜນການ ສັງລວມ;
14. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
15. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງຄະນະວິຊາປູກຝັງ**

ຄະນະວິຊາປູກຝັງ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການພັດທະນາເນື້ອໃນບົດສອນ, ຊຸດການສອນ ແລະ ສິດສອນ ວິຊາສະເພາະ ດ້ານການປູກຝັງ, ການປັບປຸງພັດທະນາຟາມປູກພືດຕ່າງໆ, ການວິໄຈດິນ ແລະ ຝຸ່ນ; ຄົ້ນຄວ້າທົດລອງ, ຝຶກອົບຮົມ ແລະ ສົ່ງເສີມວິຊາການ ດ້ານການປູກຝັງ ໃຫ້ແກ່ພະນັກງານກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ເມືອງ, ນະຄອນ, ກຸ່ມບ້ານ, ບ້ານ, ຊາວກະສິກອນ, ພະນັກງານ ຂອງໂຄງການ ແລະ ຫົວໜ່ວຍທຸລະກິດ ທີ່ມີຄວາມສົນໃຈ ພ້ອມທັງຄຸ້ມຄອງ ແລະ ພັດທະນາ ວຽກງານຝຶກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ພັດທະນາຫຼັກສູດການຮຽນ-ການສອນແບບຄວບຄູ່ ພາກທິດສະດີ ແລະ ປະຕິບັດຕົວຈິງ ໃນສາຂາວິຊາປູກຝັງ ຮ່ວມກັບຄູ່ຮ່ວມງານ ແລະ ຜູ້ປະກອບການ ພ້ອມທັງຈັດຕັ້ງປະຕິບັດການຮຽນ-ການສອນແບບຄວບຄູ່ ຕາມມາດຕະຖານປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ລະບົບການຝຶກງານສາຂາວິຊາປູກຝັງ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງນັກສຶກສາທີ່ຮຽນຈົບ;
5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ຄຸ້ມຄອງ, ພັດທະນາ ກິດຈະກຳສ້າງລາຍຮັບຈາກການເຄື່ອນໄຫວບໍລິການດ້ານເຕັກນິກວິຊາການດ້ານການປູກຝັງ ໃຫ້ແກ່ສັງຄົມ;
7. ອອກໃບຢັ້ງຢືນ ການຝຶກອົບຮົມທາງດ້ານວິຊາການດ້ານການປູກຝັງ ໃຫ້ແກ່ນັກສຳມະນາກອນຜູ້ທີ່ເຂົ້າຮ່ວມຝຶກອົບຮົມຄົບຫຼັກສູດ ຕາມໄລຍະເວລາທີ່ກຳນົດໄວ້;
8. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ໃນຄະນະວິຊາປູກຝັງ ໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຫຼາຍຮູບແບບ ຕິດພັນກັບການຮຽນ-ການສອນ, ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການສ້າງບຸກຄະລາກອນ ໃຫ້ມີຄຸນນະພາບ ເພື່ອເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນການຈັດຕັ້ງວຽກງານຕ່າງໆ ພາຍໃນຄະນະວິຊາປູກຝັງ; ຄຸ້ມຄອງ ເຄື່ອງມື, ອຸປະກອນ ແລະ ສື່ການຮຽນ-ການສອນ ຮັບໃຊ້ໃນຄະນະວິຊາປູກຝັງ ຢ່າງເປັນລະບົບ;
10. ຄົ້ນຄວ້າ, ຂຽນບົດສະເໜີໂຄງການງົບປະມານໃນການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ ຂອງຄະນະວິຊາ ເພື່ອສົ່ງໃຫ້ຫ້ອງການບໍລິຫານ ແລະ ແຜນການ ສັງລວມ;
11. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

ມາດຕາ 11 ໜ້າທີ່ ຂອງຄະນະວິຊາລ້ຽງສັດ ແລະ ການປະມົງ

ຄະນະວິຊາລ້ຽງສັດ ແລະ ການປະມົງ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການພັດທະນາເນື້ອໃນບົດສອນ, ຊຸດການສອນ ແລະ ສິດສອນ ວິຊາສະເພາະ ດ້ານການລ້ຽງສັດ ແລະ ການປະມົງ, ມີການປັບປຸງຂະຫຍາຍພັນສັດຕ່າງໆ, ການວິໃຈ, ການຄົ້ນຄວ້າທົດລອງ ພັນສັດ-ສັດນ້ຳ, ອາຫານສັດ; ຄົ້ນຄວ້າທົດລອງ, ຝຶກອົບຮົມ ແລະ ສົ່ງເສີມວິຊາການ ດ້ານການລ້ຽງສັດ, ການປະມົງ ໃຫ້ແກ່ພະນັກງານກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ເມືອງ, ນະຄອນ, ກຸ່ມບ້ານ, ບ້ານ, ຊາວກະສິກອນ ພະນັກງານ ຂອງໂຄງການ ແລະ ຫົວໜ່ວຍທຸລະກິດ ທີ່ມີຄວາມສົນໃຈ ພ້ອມທັງຄຸ້ມຄອງ ແລະ ພັດທະນາ ວຽກງານຝຶກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ພັດທະນາຫຼັກສູດການຮຽນ-ການສອນແບບຄວບຄູ່ ພາກທິດສະດີ ແລະ ປະຕິບັດຕົວຈິງ ໃນສາຂາວິຊາລ້ຽງສັດ ແລະ ການປະມົງ ຮ່ວມກັບຄູ່ຮ່ວມງານ ແລະ ຜູ້ປະກອບການ ພ້ອມທັງຈັດຕັ້ງປະຕິບັດການຮຽນການສອນແບບຄວບຄູ່ ຕາມມາດຕະຖານປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ລະບົບການຝຶກງານສາຂາວິຊາລ້ຽງສັດ ແລະ ການປະມົງ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງນັກສຶກສາທີ່ຮຽນຈົບ;
5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ຄຸ້ມຄອງ, ພັດທະນາ ກິດຈະກຳສ້າງລາຍຮັບຈາກການເຄື່ອນໄຫວບໍລິການດ້ານເຕັກນິກວິຊາການດ້ານການລ້ຽງສັດ, ການປະມົງ ໃຫ້ແກ່ສັງຄົມ;
7. ອອກໃບຢັ້ງຢືນ ການຝຶກອົບຮົມທາງດ້ານວິຊາການດ້ານການລ້ຽງສັດ, ການປະມົງ ໃຫ້ແກ່ນັກສຳມະນາກອນຜູ້ທີ່ເຂົ້າຮ່ວມຝຶກອົບຮົມຄົບຫຼັກສູດ ຕາມໄລຍະເວລາທີ່ກຳນົດໄວ້;
8. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ໃນຄະນະວິຊາລ້ຽງສັດ ແລະ ການປະມົງ ໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຫຼາຍຮູບແບບ ຕິດພັນກັບການຮຽນ-ການສອນ, ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການສ້າງບຸກຄະລາກອນ ໃຫ້ມີຄຸນນະພາບ ເພື່ອເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນການຈັດຕັ້ງວຽກງານຕ່າງໆ ພາຍໃນຄະນະວິຊາລ້ຽງສັດ ແລະ ການປະມົງ; ຄຸ້ມຄອງ ເຄື່ອງມື, ອຸປະກອນ ແລະ ສື່ການຮຽນການສອນ ຮັບໃຊ້ໃນຄະນະວິຊາລ້ຽງສັດ ແລະ ການປະມົງ ຢ່າງເປັນລະບົບ;
10. ຄົ້ນຄວ້າ, ຂຽນບົດສະເໜີໂຄງການງົບປະມານໃນການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ ຂອງຄະນະວິຊາ ເພື່ອສົ່ງໃຫ້ຫ້ອງການບໍລິຫານ ແລະ ແຜນການ ສັງລວມ;

11. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງຄະນະວິຊາປ່າໄມ້**

ຄະນະວິຊາປ່າໄມ້ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການພັດທະນາເນື້ອໃນບົດສອນ, ຊຸດການສອນ ແລະ ສິດສອນ ວິຊາສະເພາະ ດ້ານປ່າໄມ້, ການຄຸ້ມຄອງປ່າໄມ້ ປະເພດຕ່າງໆ, ການວິໄຈ ກ່ຽວກັບໄມ້, ການປັບປຸງສວນກ້າເບ້ຍໄມ້ ແລະ ການອະນຸລັກຊັບພະຍາກອນປ່າໄມ້; ພ້ອມທັງຄຸ້ມຄອງ ແລະ ພັດທະນາ ວຽກງານຝຶກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ພັດທະນາຫຼັກສູດການຮຽນ-ການສອນແບບຄວບຄູ່ ພາກທິດສະດີ ແລະ ປະຕິບັດຕົວຈິງ ໃນສາຂາວິຊາປ່າໄມ້ ຮ່ວມກັບຄູ່ຮ່ວມງານ ແລະ ຜູ້ປະກອບການ ພ້ອມທັງຈັດຕັ້ງປະຕິບັດການຮຽນ-ການສອນແບບຄວບຄູ່ ຕາມມາດຕະຖານປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ລະບົບການຝຶກງານສາຂາວິຊາປ່າໄມ້ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງນັກສຶກສາທີ່ຮຽນຈົບ;
5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ຄຸ້ມຄອງ, ພັດທະນາ ກິດຈະກຳສ້າງລາຍຮັບຈາກການເຄື່ອນໄຫວບໍລິການດ້ານເຕັກນິກວິຊາການດ້ານປ່າໄມ້ ໃຫ້ແກ່ສັງຄົມ;
7. ອອກໃບຢັ້ງຢືນ ການຝຶກອົບຮົມທາງດ້ານວິຊາການດ້ານການປ່າໄມ້ ໃຫ້ແກ່ນັກສຳມະນາກອນຜູ້ທີ່ເຂົ້າຮ່ວມຝຶກອົບຮົມຄົບຫຼັກສູດ ຕາມໄລຍະເວລາທີ່ກຳນົດໄວ້;
8. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ໃນຄະນະວິຊາປ່າໄມ້ ໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຫຼາຍຮູບແບບ ຕິດພັນກັບການຮຽນ-ການສອນ, ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການສ້າງບຸກຄະລາກອນ ໃຫ້ມີຄຸນນະພາບ ເພື່ອເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນການຈັດຕັ້ງວຽກງານຕ່າງໆ ພາຍໃນຄະນະວິຊາປ່າໄມ້; ຄຸ້ມຄອງ ເຄື່ອງມື, ອຸປະກອນ ແລະ ສື່ການຮຽນ-ການສອນ ຮັບໃຊ້ໃນຄະນະວິຊາປ່າໄມ້ ຢ່າງເປັນລະບົບ;
10. ຄົ້ນຄວ້າ, ຂຽນບົດສະເໜີໂຄງການງົບປະມານໃນການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ ຂອງຄະນະວິຊາ ເພື່ອສົ່ງໃຫ້ຫ້ອງການບໍລິຫານ ແລະ ແຜນການ ສັງລວມ;
11. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງຄະນະວິຊາທຸລະກິດກະສິກຳ**

ຄະນະວິຊາທຸລະກິດກະສິກຳ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການພັດທະນາເນື້ອໃນບົດສອນ, ຊຸດການສອນ ແລະ ສິດສອນ ວິຊາສະເພາະ ດ້ານທຸລະກິດກະສິກຳ, ການລິເລີ່ມເຮັດທຸລະກິດກະສິກຳ, ການສ້າງລາຍຮັບ, ການພັດທະນາການຕະຫຼາດ, ທຸລະກິດຂະໜາດນ້ອຍ, ການເງິນຈຸລະພາກ, ການປຸງແຕ່ງຜົນຜະລິດກະສິກຳອອກຈຳໜ່າຍສູ່ສັງຄົມ; ຄົ້ນຄວ້າທົດລອງດ້ານທຸລະກິດກະສິກຳ ພ້ອມທັງຄຸ້ມຄອງ ແລະ ພັດທະນາ ວຽກງານການຝຶກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ພັດທະນາຫຼັກສູດການຮຽນ-ການສອນແບບຄວບຄູ່ ພາກທິດສະດີ ແລະ ປະຕິບັດຕົວຈິງ ໃນສາຂາວິຊາທຸລະກິດກະສິກຳ ຮ່ວມກັບຄູ່ຮ່ວມງານ ແລະ ຜູ້ປະກອບການ ພ້ອມທັງຈັດຕັ້ງປະຕິບັດການຮຽນ-ການສອນແບບຄວບຄູ່ ຕາມມາດຕະຖານປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ລະບົບການຝຶກງານສາຂາວິຊາທຸລະກິດກະສິກຳ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງນັກສຶກສາທີ່ຮຽນຈົບ;
5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ຄຸ້ມຄອງ, ພັດທະນາກິດຈະກຳສ້າງລາຍຮັບຈາກທຸລະກິດກະສິກຳ ເຊັ່ນ: ກິດຈະກຳກອງທຶນ, ກິດຈະກຳສ້າງລາຍຮັບຂອງນັກສຶກສາ ແລະ ການປຸງແຕ່ງຜົນຜະລິດກະສິກຳອອກຈຳໜ່າຍແກ່ສັງຄົມ;
7. ອອກໃບຢັ້ງຢືນ ການຝຶກອົບຮົມທາງດ້ານວິຊາການດ້ານທຸລະກິດກະສິກຳ ໃຫ້ແກ່ນັກສຳມະນາກອນຜູ້ທີ່ເຂົ້າຮ່ວມຝຶກອົບຮົມຄົບຫຼັກສູດ ຕາມໄລຍະເວລາທີ່ກຳນົດໄວ້;
8. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ໃນຄະນະວິຊາທຸລະກິດກະສິກຳ ໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຫຼາຍຮູບແບບ ຕິດພັນກັບການຮຽນ-ການສອນການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການສ້າງບຸກຄະລາກອນ ໃຫ້ມີຄຸນນະພາບ ເພື່ອເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນການຈັດຕັ້ງວຽກງານຕ່າງໆ ພາຍໃນຄະນະວິຊາທຸລະກິດກະສິກຳ; ຄຸ້ມຄອງ ເຄື່ອງມື, ອຸປະກອນ ແລະ ສື່ການຮຽນ-ການສອນ ຮັບໃຊ້ໃນຄະນະວິຊາທຸລະກິດກະສິກຳ ຢ່າງເປັນລະບົບ;
10. ຄົ້ນຄວ້າ, ຂຽນບົດສະເໜີໂຄງການງົບປະມານໃນການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ ຂອງຄະນະວິຊາ ເພື່ອສົ່ງໃຫ້ຫ້ອງການບໍລິຫານ ແລະ ແຜນການ ສັງລວມ;
11. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງຄະນະວິຊາສັດຕະວະແພດ**

ຄະນະວິຊາສັດຕະວະແພດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນງານ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມາເປັນແຜນງານ, ໂຄງການລະອຽດສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ເປັນເຈົ້າການພັດທະນາເນື້ອໃນບົດສອນ, ຊຸດການສອນ ແລະ ສິດສອນ ວິຊາສະເພາະ ດ້ານວິຊາການສັດຕະວະແພດ, ການປັບປຸງພັດທະນາການວິໄຈ, ການຄົ້ນຄວ້າທົດລອງພະຍາດສັດ, ປິ່ນປົວສັດ, ຈັດຝຶກອົບຮົມ ແລະ ສົ່ງເສີມປະຊາຊົນ, ສາມາດນຳໃຊ້ ວິຊາການໃນການຄຸ້ມຄອງ ແລະ ປິ່ນປົວພະຍາດສັດ ໂດຍພື້ນຖານ ພ້ອມທັງຄຸ້ມຄອງ ແລະ ພັດທະນາວຽກງານການຝຶກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ພັດທະນາຫຼັກສູດການຮຽນ-ການສອນແບບຄວບຄູ່ ພາກທິດສະດີ ແລະ ປະຕິບັດຕົວຈິງ ໃນສາຂາວິຊາສັດຕະວະແພດ ຮ່ວມກັບຄູ່ຮ່ວມງານ ແລະ ຜູ້ປະກອບການ ພ້ອມທັງຈັດຕັ້ງປະຕິບັດການຮຽນ-ການສອນແບບຄວບຄູ່ ຕາມມາດຕະຖານປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ລະບົບການຝຶກງານສາຂາວິຊາສັດຕະວະແພດ ໃຫ້ມີຄຸນນະພາບ ໂດຍເລັ່ງໃສ່ການຝຶກງານນຳພາກເອກະຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງໂອກາດການມີວຽກເຮັດງານທຳ ຂອງນັກສຶກສາທີ່ຮຽນຈົບ;
5. ຈັດຕັ້ງປະຕິບັດ 12 ມາດຕະຖານ ແລະ 45 ຕົວຊີ້ວັດ ກ່ຽວກັບວຽກງານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ໃຫ້ໄດ້ຮັບຄຸນນະພາບດີ;
6. ຄຸ້ມຄອງ, ພັດທະນາກິດຈະກຳສ້າງລາຍຮັບຈາກການປິ່ນປົວສັດ, ດູແລສຸຂະພາບສັດ ແລະ ສົ່ງເສີມດ້ານວິຊາການສັດຕະວະແພດ ໃຫ້ປະຊາຊົນ;
7. ອອກໃບຢັ້ງຢືນ ການຝຶກອົບຮົມທາງດ້ານວິຊາການດ້ານສັດຕະວະແພດ ໃຫ້ແກ່ນັກສຳມະນາກອນຜູ້ທີ່ເຂົ້າຮ່ວມຝຶກອົບຮົມຄົບຫຼັກສູດ ຕາມໄລຍະເວລາທີ່ກຳນົດໄວ້;
8. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ໃນຄະນະວິຊາສັດຕະວະແພດ ໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຫຼາຍຮູບແບບ ຕິດພັນກັບການຮຽນ-ການສອນ ການບໍລິການດ້ານວິຊາການ ໂດຍການພົວພັນປະສານງານກັບ ພາກລັດ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການສ້າງບຸກຄະລາກອນ ໃຫ້ມີຄຸນນະພາບ ເພື່ອເປັນການສ້າງລາຍຮັບ ແລະ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ຄູ-ອາຈານ ໃນການຈັດຕັ້ງວຽກງານຕ່າງໆ ພາຍໃນຄະນະວິຊາສັດຕະວະແພດ; ຄຸ້ມຄອງ ເຄື່ອງມື, ອຸປະກອນ ແລະ ສື່ການຮຽນ-ການສອນ ຮັບໃຊ້ໃນຄະນະວິຊາສັດຕະວະແພດ ຢ່າງເປັນລະບົບ;
10. ຄົ້ນຄວ້າ, ຂຽນບົດສະເໜີໂຄງການງົບປະມານໃນການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ ຂອງຄະນະວິຊາ ເພື່ອສົ່ງໃຫ້ຫ້ອງການບໍລິຫານ ແລະ ແຜນການ ສັງລວມ;
11. ວາງແຜນວຽກ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງສະພາທີ່ປຶກສາວິທະຍາໄລ**

ສະພາທີ່ປຶກສາວິທະຍາໄລ ມີໜ້າທີ່ ດັ່ງນີ້:

1. ປະກອບສ່ວນເຂົ້າໃນການພັດທະນາຫຼັກສູດ ແລະ ການຈັດການ ການສຶກສາ ໃຫ້ມີຄຸນນະພາບ;
2. ໃຫ້ຄຳແນະນຳຕໍ່ບັນຫາຕ່າງໆ ທີ່ກ່ຽວຂ້ອງກັບການພັດທະນາການສຶກສາ ເພື່ອຍົກລະດັບຄຸນນະພາບ ແລະ ປັບປຸງຢ່າງຕໍ່ເນື່ອງ ລວມທັງຍຸດທະສາດໃນການບໍລິຫານຈັດການວິທະຍາໄລ;
3. ຮັບຟັງບັນຫາຕ່າງໆ ຂອງວິທະຍາໄລ, ພ້ອມກັນວາງແຜນແກ້ໄຂບັນຫາດັ່ງກ່າວ ແລະ ສ້າງໂຄງການໃໝ່ໆ ຮ່ວມກັນ;
4. ພັດທະນາລະບົບການຝຶກງານ ໃຫ້ມີປະສິດທິຜົນ ໂດຍສະໜັບສະໜູນໂອກາດໃຫ້ນັກສຶກສາ ເຂົ້າເຖິງຕະຫຼາດແຮງງານໂດຍກົງ ທັງພາກລັດ ແລະ ເອກະຊົນ, ທັງອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ຫວັງຜົນກຳໄລ ພ້ອມນັ້ນກໍໃຫ້ຄຳປຶກສາ, ການຝຶກອົບຮົມ, ການຈ້າງງານ ແລະ ປະສົບການໃນການຮຽນຮູ້ອື່ນໆ ແກ່ນັກສຶກສາ;
5. ເຂົ້າຮ່ວມການສິດສອນໃນຂົງເຂດທີ່ກ່ຽວຂ້ອງ ພ້ອມທັງເຮັດການຄົ້ນຄວ້າທົດລອງດ້ານກະສິກຳ ແລະ ປ່າໄມ້ ເພື່ອແກ້ໄຂບັນຫາ ຕາມທ່າແຮງທີ່ມີ;
6. ຊອກຫາທຶນການສຶກສາແກ່ນັກສຶກສາທີ່ຮຽນເກັ່ງ ແລະ ນັກສຶກສາທີ່ທຸກຍາກດ້ອຍໂອກາດ;
7. ເຂົ້າຮ່ວມງານສຳຄັນຕ່າງໆ ໃນການສົ່ງເສີມອະນາຄົດຂອງນັກສຶກສາ;
8. ປະກອບສ່ວນເຂົ້າໃນການພັດທະນາເຄືອຂ່າຍຄູ່ຮ່ວມງານໃນທຸກລະດັບ ໃຫ້ມີຄວາມເຂັ້ມແຂງ;
9. ຊ່ວຍຊອກຫາແຫຼ່ງທຶນ ແລະ ຊັບພະຍາກອນຕ່າງໆ ເພື່ອພັດທະນາສິ່ງອຳນວຍຄວາມສະດວກສຳລັບການຮຽນ-ການສອນ;
10. ສະພາທີ່ປຶກສາ ຈັດກອງປະຊຸມສາມັນ 1 ຄັ້ງຕໍ່ປີ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ ຂອງສະພາບໍລິຫານວິທະຍາໄລ**

ສະພາບໍລິຫານວິທະຍາໄລ ມີໜ້າທີ່ ດັ່ງນີ້:

1. ຮັບຮອງ ແຜນພັດທະນາ, ແຜນການ 5 ປີ, ຍຸດທະສາດ ແລະ ວິໄສທັດ ຂອງວິທະຍາໄລ;
2. ຮັບຮອງ ແຜນການເຄື່ອນໄຫວ ແລະ ງົບປະມານ ປະຈຳພາກຮຽນ ແລະ ປີການສຶກສາ ຂອງວິທະຍາ ໄລ;
3. ຮັບຮອງ ບົດສະຫຼຸບ ການປະຕິບັດວຽກງານ ແລະ ງົບປະມານ ປະຈຳປີການສຶກສາ ຂອງວິທະຍາໄລ;
4. ຮັບຮອງ ການສະເໜີ ເລື່ອນຊັ້ນ-ຂັ້ນເງິນເດືອນ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ພາຍໃນວິທະຍາໄລ;
5. ຮັບຮອງການສະເໜີ ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ, ຄູ-ອາຈານ ແລະ ນັກສຶກສາ;
6. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ກັບການບໍລິຫານ ແລະ ການປັບປຸງການຈັດຕັ້ງ ຂອງວິທະຍາໄລ;
7. ປຶກສາຫາລືນະໂຍບາຍລວມ, ຕັດສິນ ແລະ ຕົກລົງບັນຫາຕ່າງໆ ທີ່ສຳຄັນ ຂອງວິທະຍາໄລ ຕາມສະພາບເງື່ອນໄຂຕົວຈິງ;
8. ສະພາບໍລິຫານວິທະຍາໄລ ຈັດກອງປະຊຸມສາມັນ 3 ຄັ້ງຕໍ່ປີຄື: ໄລຍະເປີດສົກຮຽນ, ທ້າຍພາກຮຽນທີ 1 ແລະ ໄລຍະສິ້ນສຸດປີການສຶກສາ ໃນກໍລະນີຈຳເປັນ ອາດຈະເປີດກອງປະຊຸມວິສາມັນກໍໄດ້;
9. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 17 ໜ້າທີ່ ຂອງສະພາວິຊາການວິທະຍາໄລ**

ສະພາວິຊາການວິທະຍາໄລ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ຮັບຮອງເອົາແຜນການເຄື່ອນໄຫວດ້ານ ວິຊາການ, ກິດຈະກຳການຮຽນ-ການສອນຕ່າງໆ, ການຝຶກງານ ແລະ ການເຄື່ອນໄຫວກິດຈະກຳ ຂອງນັກສຶກສາ;
2. ຄົ້ນຄວ້າ, ພິຈາລະນາ ແລະ ຕັດສິນ ຜົນການຮຽນຂອງນັກສຶກສາ ປະຈຳພາກຮຽນ, ປີຮຽນ ແລະ ຈົບຫຼັກສູດ;
3. ຄົ້ນຄວ້າ, ປຶກສາຫາລື, ພິຈາລະນາ ແລະ ຮັບຮອງເອົາ ຫົວຂໍ້ ແລະ ຜົນ ຂອງການຄົ້ນຄວ້າທົດລອງ, ຝຶກອົບຮົມ, ສົ່ງເສີມ ແລະ ບໍລິການດ້ານວິຊາການ ແກ່ສັງຄົມ; ຝຶກອົບຮົມ ແລະ ຍົກລະດັບ ວິຊາສະເພາະ ແລະ ວິຊາຄູ ໃຫ້ແກ່ ຄູ-ອາຈານ ພາຍໃນວິທະຍາໄລ;
4. ຄົ້ນຄວ້າ, ປຶກສາຫາລື, ພິຈາລະນາ ແລະ ຮັບຮອງເອົາການສະເໜີປັບປຸງ ຫຼັກສູດ, ສື່ການຮຽນ-ການສອນ ຕຳລາຮຽນ ແລະ ການຝຶກອົບຮົມ;
5. ຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ຮັບຮອງເອົາ ບົດສະຫຼຸບວຽກງານ ແລະ ງົບປະມານ ດ້ານວິຊາການ ປະຈຳພາກຮຽນ ແລະ ປະຈຳປີການສຶກສາ;
6. ສະພາວິຊາການ ຈັດກອງປະຊຸມ 3 ຄັ້ງຕໍ່ປີຄື: ໄລຍະເປີດສົກຮຽນ, ທ້າຍພາກຮຽນທີ 1 ແລະ ໄລຍະສິ້ນສຸດປີການສຶກສາ ໃນກໍລະນີຈຳເປັນອາດຈະເປີດກອງປະຊຸມວິສາມັນກໍໄດ້;
7. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 18 ຫຼັກການ**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີຂອງກະຊວງກະສິກຳ ແລະ ປ່າໄມ້, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

**ມາດຕາ 19 ແບບແຜນວິທີເຮັດວຽກ**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການ ກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;

3. ເຮັດວຽກຕ້ອງຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນໃນການ ຈັດຕັ້ງປະຕິບັດ ແຜນການແຕ່ລະໄລຍະ;
4. ຜູ້ອຳນວຍການ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະພັກ, ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຜູ້ອຳນວຍການ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງ ຜູ້ອຳນວຍການ;
5. ຜູ້ອຳນວຍການ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຜູ້ອຳນວຍການ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຜູ້ອຳນວຍການ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຜູ້ອຳນວຍການຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ງົບປະມານ ແລະ ຕາປະທັບ**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 21 ການຈັດຕັ້ງປະຕິບັດ**

ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ, ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ສະບັບເລກທີ 3680/ກປ, ລົງວັນທີ 02 ສິງຫາ 2017.

ຫຼິງແທນ ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້ / ລັດຖະມົນຕີ

ກິແກ້ວ ສິງນາວົງ